ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ແຜນການ ແລະ ການລົງທຶນ

ເລກທີ 567 /ກຜທ
ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ 2024

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໃນ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດຢູ່ ສປປ ລາວ ສະບັບເລກທີ 59/ສພຊ, ລົງວັນທີ 26 ທັນວາ 2014;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ 357/ລບ ລົງວັນທີ 09 ຕຸລາ 2019;
- ອີງຕາມ ຄຳເຫັນຂອງ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການຕ່າງປະເທດ ຄັ້ງວັນທີ 31 ມັງກອນ 2024;
- ອີງຕາມ ໜັງສືສະເໜີຂອງຫ້ອງການ ກະຊວງ ແຜນການ ແລະ ການລົງທຶນ ສະບັບເລກທີ0597/ກຜທ.ຫກ2, ລົງວັນທີ 26 ກຸມພາ 2024.

### ລັດຖະມົນຕີ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ເຄື່ອນໄຫວປະຕິບັດໜ້າທີ່ ໃນ ສປປ ລາວ ໃຫ້ ສອດຄ່ອງຕາມກົດໝາຍຂອງ ສປປ ລາວ ແນໃສ່ຊຸກຍູ້ຂອບໜ້າວຽກ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ໃຫ້ມີປະສິດທິຜົນ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງຊາດ.

**ມາດຕາ 2 ການຄຸ້ມຄອງ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ**

ການຄຸ້ມຄອງ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ແມ່ນການຕິດຕາມ, ກວດກາ, ປະເມີນ ແລະ ອານຸມັດ ກ່ອນຮັບເອົາບຸກຄົນດັ່ງກ່າວ ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ໃນ ສປປ ລາວ.

ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ແມ່ນບຸກຄົນທີ່ໄດ້ຮັບການຮັບຮອງ ແລະ ນຳສົ່ງ ໂດຍ ບັນດາຜູ້ໃຫ້ທຶນ ຫຼື ຄູ່ຮ່ວມພັດທະນາ ໂດຍຜ່ານການສະໜີ, ຄົ້ນຄວ້າ ແລະ ຮັບຮອງເອົາ ຈາກກະຊວງ, ອົງການ ລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງ ສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊ່ຽວຊານ** ໝາຍເຖິງ ບຸກຄົນ ທີ່ມີຄວາມຮູ້, ຄວາມຊຳນານ ແລະ ປະສົບການສະເພາະດ້ານວິຊາການໃດໜຶ່ງ ໃນການມາປະຕິບັດໜ້າທີ່ຕາມຂອບໜ້າວຽກ;

2. **ອາສາສະໝັກ** ໝາຍເຖິງ ບຸກຄົນ ທີ່ອາສາເຂົ້າມາຊ່ວຍເຫຼືອ ແລະ ປະຕິບັດໜ້າທີ່ຕາມຂອບໜ້າວຽກ ດ້ວຍຄວາມສະໝັກໃຈ;

3. **ນັກສຶກສາຝຶກງານຕ່າງປະເທດ** ໝາຍເຖິງ ນັກສຶກສາທີ່ກຳລັງສຶກສາ, ຄົ້ນຄວ້າຮ່ຳຮຽນ ຢູ່ວິທະຍາໄລ,ສະຖາບັນການສຶກສາ ແລະ ມະຫາວິທະຍາໄລ ໃດໜຶ່ງ ທີ່ລົງຝຶກງານຕົວຈິງ ໃນນາມອົງການຮ່ວມມືເພື່ອການພັດທະນາ ຂອງປະເທດຕົນທີ່ປະຈຳຢູ່ ສປປ ລາວ;

4. **ຄະນະວິຊາການຕ່າງປະເທດ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ເປັນພະນັກງານຂອງບັນດາສະຖາບັນການເງິນສາກົນ, ອົງການຈັດຕັ້ງສາກົນ ແລະ ຂອງປະເທດຕ່າງໆ ທີ່ມາປະຕິບັດວຽກງານ ໄລຍະເວລາໃດໜຶ່ງ ຢູ່ ສປປ ລາວ;

5. **ຫົວໜ້າ ຫຼື ຮອງຫົວໜ້າອົງການ, ພະນັກງານອົງການ** ໝາຍເຖິງ ບຸກຄົນ ທີ່ມາປະຈຳການຢູ່ໃນອົງການທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງສະຖານທູດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງເຄືອຂ່າຍ ແລະ ສະຖາບັນການເງິນສາກົນ;

6. **ຄູ່ຮ່ວມພັດທະນາ** ໝາຍເຖິງ ລັດຖະບານຕ່າງປະເທດ, ອົງການຈັດຕັ້ງຂອງລັດຖະບານຕ່າງປະເທດທີ່ໄດ້ຮັບການມອບສິດ ແລະ ອົງການຈັດຕັ້ງສາກົນ ທີ່ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ດ້ານການເງິນ, ວັດຖຸພັນ ແລະ ອຸປະກອນຕ່າງໆແກ່ ສປປ ລາວ;

7. **ຂອບໜ້າວຽກ** ໝາຍເຖິງ ໜ້າວຽກຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ຈັດຕັ້ງປະຕິບັດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອຄຸ້ມຄອງຊ່ຽວຊານ,ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໃນການມາປະຕິບັດໜ້າທີ່ພາຍໃຕ້ ແຜນງານ ຫຼື ໂຄງການ ຊກພ;

ຍົກເວັ້ນອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ບຸກຄົນ, ນິຕິບຸກຄົນ, ສະມາຄົມ, ມູນນິທິ, ກອງທຶນ, ສະຖາບັນ ແລະ ສະໂມສອນ.

## ໝວດທີ 2

## ໄລຍະເວລາ, ຂັ້ນຕອນ ແລະ ການອານຸມັດ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ

**ມາດຕາ 5 ໄລຍະເວລາຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ**

ໄລຍະເວລາຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ມີ ສອງ ໄລຍະ ຄື:

1. ໄລຍະສັ້ນ (ໜຶ່ງ ເດືອນລົງມາ);
2. ໄລຍະຍາວ (ຫຼາຍກວ່າ ໜຶ່ງ ເດືອນຂຶ້ນໄປ).

**ມາດຕາ 6 ຂັ້ນຕອນການຮັບເອົາ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ**

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ມີຄວາມຕ້ອງການຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໄລຍະສັ້ນ ຫຼື ໄລຍະຍາວ ມາເປັນທີ່ປຶກສາ ຫຼື ມາຊ່ວຍເຫຼືອ

ທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ ໃນຂະແໜງການຂອງຕົນ ສາມາດຍື່ນໜັງສືສະເໜີ ຫາກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ ແລະ ອະນຸມັດ.

ສໍາລັບເອກະສານຮັບເອົາ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ປະກອບມີ ດັ່ງນີ້:

1. ໜັງສືສະເໜີຂໍອະນຸມັດຮັບເອົາ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ໄດ້ຮັບການເຊັນຢັ້ງຢືນຈາກລັດຖະມົນຕີ, ຫົວໜ້າອົງການລັດ ຫຼື ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ຫຼື ຮອງເຈົ້າຄອງ, ຮອງເຈົ້າແຂວງ. ສ່ວນພະນັກງານ ຫຼື ຊ່ຽວຊານ ມາປະຕິບັດໜ້າທີ່ຢູ່ໃນຫ້ອງການຂອງອົງການພາຍໃຕ້ການຄຸ້ມຄອງຂອງສະຖານທູດ ຕ້ອງໄດ້ຮັບການຢັ້ງຢືນຈາກ ຫົວໜ້າ ຫຼື ຮອງຫົວໜ້າອົງການ;

2. ສໍາເນົາ ສັນຍາໂຄງການ, ເອກະສານແຜນງານ ຫຼື ໂຄງການ ຊກພ ຫຼື ບົດບັນທຶກຊ່ວຍຈໍາ;

3. ສໍາເນົາ ຊີວະປະຫວັດຂອງ ຊ່ຽວຊານ, ອາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ;

4. ສໍາເນົາ ຂອບໜ້າວຽກ ແລະ ໜັງສືຜ່ານແດນ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ;

5. ສໍາເນົາ ແຈ້ງການຮັບເອົາແຜນງານ ຫຼື ໂຄງການ ຊກພ (ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແລະ/ຫຼື ກະຊວງແຜນການ ແລະ ການລົງທຶນ).

**ມາດຕາ 7 ການອະນຸມັດຮັບເອົາ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ**

ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການຄົ້ນຄວ້າ ອະນຸມັດຮັບເອົາ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ຕາມການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສໍາລັບໄລຍະເວລາການອານຸມັດ ໃຫ້ປະຕິບັດ ດັ່ງນີ້:

- ໄລຍະເວລາ ໜຶ່ງ ເດືອນລົງມາ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າພິຈາລະນາ ແລະ ດໍາເນີນການ;
- ໄລຍະເວລາຫຼາຍກວ່າ ໜຶ່ງ ເດືອນຂຶ້ນໄປ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄ້ວາ ພິຈາລະນາອະນຸມັດຕາມລະບຽບການ;
- ໄລຍະອະນຸມັດຮັບເອົາ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໃໝ່ ແມ່ນກໍານົດໃຫ້ສູງສຸດບໍ່ເກີນ ສອງ ປີ;
- ສ່ວນການສືບຕໍ່ໄລຍະການປະຕິບັດງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ແມ່ນກໍານົດໃຫ້ ປີຕໍ່ປີ.

## ໝວດທີ 3
## ຄວາມຮັບຜິດຊອບໃນການຕິດຕາມ, ການປະເມີນ, ການລາຍງານ ແລະ ການສິ້ນສຸດໜ້າທີ່ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ

**ມາດຕາ 8 ຄວາມຮັບຜິດຊອບໃນການຕິດຕາມ, ການປະເມີນ, ການລາຍງານການເຮັດວຽກງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ.**

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຊກພ ມີຄວາມຮັບຜິດຊອບໃນການຕິດຕາມ, ການປະເມີນ, ການລາຍງານ ຜົນການຈັດຕັ້ງປະຕິບັດໜ້າວຽກງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ.

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີໜ້າທີ່ປະຕິບັດກົນໄກ ໃນການຕິດຕາມ, ການປະເມີນ ແລະ ການລາຍງານ ດັ່ງນີ້:

1. ສ້າງກົນໄກໃນການຕິດຕາມ ແລະ ປະເມີນຜົນໄດ້ຮັບຈາກການປະຕິບັດຂອບໜ້າວຽກຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຢ່າງໜ້ອຍທຸກ ສາມ ເດືອນ ເພື່ອເປັນການທົບທວນຄືນ, ກວດກາຄວາມຄືບໜ້າ, ບັນຫາ ແລະ ສິ່ງທ້າທາຍ ໃນການມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ໄລຍະຜ່ານມາບົນພື້ນຖານນັ້ນ ເພື່ອຊອກຫາວິທີການແກ້ໄຂຮ່ວມກັນຢ່າງມີປະສິດທິພາບ;

2. ລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດວຽກງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໃຫ້ກະຊວງແຜນການ ແລະ ການລົງທຶນ ປະຈຳ ສາມ ເດືອນ ເພື່ອເປັນຂໍ້ມູນ ແລະ ໃຫ້ສາມາດຕິດຕາມການເຄື່ອນໄຫວວຽກງານໄດ້ຢ່າງເປັນປົກກະຕິ;

3. ແຜນງານ ຫຼື ໂຄງການ ຊກພ ຕ້ອງລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຕໍ່ຄະນະຊີ້ນຳແຜນງານ ຫຼື ໂຄງການ ຊກພ ເປັນປະຈຳ ສາມເດືອນ ແລະ ປະຈຳປີ;

4. ໜ່ວຍງານຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ ມີໜ້າທີ່ລາຍງານຜົນສຳເລັດການມາປະຕິບັດໜ້າທີ່ວຽກງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຕາມຂອບໜ້າວຽກ ໃຫ້ຄະນະຊີ້ນຳແຜນງານ ຫຼື ໂຄງການ ຊກພ ຊາບ.

**ມາດຕາ 9 ການສິ້ນສຸດ ແລະ ສືບຕໍ່ ວຽກງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ**

ກ່ອນການສິ້ນສຸດການປະຕິບັດໜ້າທີ່ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຊກພ ຕ້ອງໄດ້ສົ່ງຜົນການປະເມີນຜົນການປະຕິບັດໜ້າທີ່ຂອງບຸກຄົນດັ່ງກ່າວ ໃນໄລຍະຜ່ານມາໃຫ້ ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ ແລະ ກະຊວງການເງິນ;

ກ່ອນການສືບຕໍ່ໄລຍະການມາປະຕິບັດໜ້າທີ່ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ພາກສ່ວນທີ່ກ່ຽວຂ້ອງ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ແລະ ຄູ່ຮ່ວມພັດທະນາ ຕ້ອງໃຫ້ຈັດກອງປະຊຸມປຶກສາຫາລື ເພື່ອຄວາມເອກະພາບຕໍ່ກັບຜົນການປະເມີນໜ້າວຽກຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໂດຍການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 4

## ສິດ ແລະ ໜ້າທີ່ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ

**ມາດຕາ 10 ສິດ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ**

ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ມີ ສິດ ດັ່ງນີ້:

1. ເຄື່ອນໄຫວ, ປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງຕົນ ຕາມຂອບໜ້າວຽກທີ່ກຳນົດໄວ້ ແລະ ວຽກງານອື່ນໆ ຕາມຄວາມເໝາະສົມ;

2. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

3. ຮັບການຍ້ອງຍໍຕາມລະບຽບການ, ຕາມການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຊກພ ໂດຍອີງໃສ່ຜົນງານຂອງບຸກຄົນທີ່ດີເດັ່ນປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ຕໍ່ກັບການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ.

**ມາດຕາ 11 ໜ້າທີ່ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ**

ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ມີ ໜ້າທີ່ ດັ່ງນີ້:

1. ໃຫ້ຄຳແນະນຳທາງດ້ານວິຊາການ, ຖ່າຍທອດຄວາມຮູ້ຄວາມສາມາດ, ປະສົບການ ແລະ ບົດຮຽນໃຫ້ແກ່ພະນັກງານ ແລະ ໜ່ວຍງານທີ່ກ່ຽວຂ້ອງ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຊກພ ຕາມຂອບໜ້າວຽກ ທີ່ກຳນົດໄວ້ໃນເອກະສານສັນຍາ;

2. ສະຫຼຸບລາຍງານ, ຕີລາຄາຄວາມຄືບໜ້າ ຂອງໜ້າທີ່ວຽກງານທີ່ຖືກມອບໝາຍ ຕາມຂອບໜ້າວຽກ ທີ່ກຳນົດໄວ້ໃນເອກະສານສັນຍາ ການຮ່ວມມືຂອງແຜນງານ ຫຼື ໂຄງການ ຊກພ ລວມເຖິງວຽກງານອື່ນໆຕາມຄວາມເໝາະສົມປະຈຳ ສາມ ເດືອນ ແລະ ປະຈຳປີ ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຊກພ ຢ່າງເປັນປົກກະຕິ;

3. ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 12 ຂໍ້ຫ້າມທົ່ວໄປ

ຫ້າມ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ມີພຶດຕິກຳ ດັ່ງນີ້:

1. ຮັບເອົາ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໂດຍບໍ່ຖືກຕ້ອງຕາມລະບຽບຫຼັກການ ແລະ ບໍ່ໄດ້ຮັບການເຫັນດີ ທາງດ້ານຫຼັກການ ຈາກກະຊວງແຜນການ ແລະ ການລົງທຶນ;

2. ອະນຸຍາດໃຫ້ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ເດີນທາງເຂົ້າມາ ສປປ ລາວ ກ່ອນ ແລ້ວຈຶ່ງສະເໜີຂໍອະນຸມັດຮັບເອົາຕາມພາຍຫຼັງ;

3. ອະນຸຍາດໃຫ້ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ສືບຕໍ່ປະຕິບັດໜ້າທີ່ ຢູ່ ສປປ ລາວ ພາຍຫຼັງໝົດກຳນົດສັນຍາວ່າຈ້າງຢູ່ ແຜນງານ ຫຼື ໂຄງການ ຊກພ;

4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

### ມາດຕາ 13 ຂໍ້ຫ້າມສຳລັບຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ

ຫ້າມ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ພັກເຊົາບໍ່ຖືກຕ້ອງ ຫຼື ຢູ່ເກີນກຳນົດເວລາພັກເຊົາ;

2. ເຄື່ອນໄຫວເກີນສິດ ແລະ ໜ້າທີ່ ກໍຄືພາລະບົດບາດ ທີ່ລັດຖະບານ ສປປ ລາວ ໄດ້ອະນຸມັດ;

3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

## ໝວດທີ 6
## ການຄຸ້ມຄອງວຽກງານ
## ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ

### ມາດຕາ 14 ໜ້າທີ່ຄວາມຮັບຜິດຊອບຂອງ ກະຊວງແຜນການ ແລະ ການລົງທຶນ

ກະຊວງ ແຜນການ ແລະ ການລົງທຶນ ມີໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ອະນຸມັດຮັບເອົາ ແລະ ຄຸ້ມຄອງ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ມາປະຕິບັດໜ້າທີ່ພາຍໃຕ້ ແຜນງານ ຫຼື ໂຄງການ ຊກພ ໂດຍປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

2. ຕິດຕາມ ແລະ ຊຸກຍູ້ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຊກພ ພ້ອມທັງເອົາໃຈໃສ່ເຮັດວຽກກັບຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານ

ຕ່າງປະເທດ ໃຫ້ມີປະສິດທິຜົນ ແລະ ລາຍງານຜົນການເຮັດວຽກຂອງບຸກຄົນດັ່ງກ່າວ ໃຫ້ ກະຊວງແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ ປະຈໍາ ຫົກ ເດືອນ ແລະ ປະຈໍາປີ;

3. ຄົ້ນຄ້ວາ ແລະ ພິຈາລະນາການຂໍສືບຕໍ່, ໂຈະ ແລະ ຍົກເລີກ ການປະຕິບັດຂອບໜ້າວຽກ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ຕາມການສະເໜີ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

4. ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການສະເໜີ ແລະ ຈັດຕັ້ງປະຕິບັດວຽກງານການຍ້ອງຍໍ ໃຫ້ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດໃນ ສປປ ລາວ.

**ມາດຕາ 15 ໜ້າທີ່ຄວາມຮັບຜິດຊອບຂອງ ກະຊວງການຕ່າງປະເທດ**

ກະຊວງ ການຕ່າງປະເທດ ມີໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

1. ອໍານວຍຄວາມສະດວກ ໃນການອອກວີຊາເຂົ້າ ສປປ ລາວ, ວີຊາເຂົ້າ-ອອກຫຼາຍເທື່ອ ແລະ ຢັ້ງຢືນອອກບັດພັກເຊົາ ໃຫ້ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຕາມການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ, ບົນພື້ນຖານການເຫັນດີ ແລະ ອະນຸມັດຂອງ ກະຊວງ ແຜນການ ແລະ ການລົງທຶນ;

2. ເຂົ້າຮ່ວມໃນການຄົ້ນຄວ້າ, ຍ້ອງຍໍ ແລະ ດໍາເນີນເອກະສານຕ່າງໆ ໃນການຍ້ອງຍໍໃຫ້ແກ່ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ຂອງພາກສ່ວນທີ່ກ່ຽວຂ້ອງ;

3. ຄົ້ນຄວ້າ, ສະເໜີຫາກະຊວງການເງິນ ກ່ຽວກັບການຂໍອະນຸຍາດນໍາເຂົ້າ-ອອກ ຫຼື ຍົກເວັ້ນພາສີ-ອາກອນ ແລະ ຄ່າທໍານຽມຕ່າງໆກ່ຽວກັບພາຫານະ, ອຸປະກອນຮັບໃຊ້ດ້ານວິຊາການ ແລະ ເຄື່ອງໃຊ້ສ່ວນຕົວໃຫ້ແກ່ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ບົນພື້ນຖານການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 16 ໜ້າທີ່ຄວາມຮັບຜິດຊອບຂອງ ກະຊວງ ປ້ອງກັນຄວາມສະຫງົບ**

ກະຊວງ ປ້ອງກັນຄວາມສະຫງົບ ມີໜ້າທີ່ຄວາມຮັບຜິດຊອບ ມີດັ່ງນີ້:

1. ຕິດຕາມ, ກວດກາ, ອໍານວຍຄວາມສະດວກການເຂົ້າ-ອອກ, ການຂຶ້ນທະບຽນ, ອອກບັດພັກເຊົາ, ກໍານົດເວລາພັກເຊົາ ແລະ ຕໍ່ເວລາພັກເຊົາ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ໂດຍສົມທົບກັບກະຊວງ ການຕ່າງປະເທດ;

2. ພາຍຫຼັງກົມກົງສຸນ ກະຊວງ ການຕ່າງປະເທດ ສົ່ງສະໂໜດນໍາສົ່ງຫາ ກະຊວງປ້ອງກັນຄວາມສະຫງົບໂດຍສະເພາະແມ່ນ ກົມຕໍາຫຼວດຄຸ້ມຄອງຄົນຕ່າງປະເທດ ຈຶ່ງສາມາດຂຶ້ນທະບຽນ ແລະ ອອກບັດພັກເຊົາ ໃຫ້ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຕາມກໍານົດເວລາພັກເຊົາ ຕາມການສະເໜີຈາກອົງການ, ໂຄງການຕ່າງໆ ທີ່ຂໍໄລຍະພັກເຊົາ ແຕ່ ສາມ ເດືອນ, ຫົກ ເດືອນ ແລະ ໜຶ່ງ ປີ;

3. ການຂຶ້ນທະບຽນ ແລະ ການອອກບັດອະນຸຍາດພັກເຊົາ ຈະຖືກລົບລ້າງ ໃນກໍລະນີ ທີ່ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ມີການເຄື່ອນໄຫວທີ່ລະເມີດກົດໝາຍ ແລະ ລະບຽບການ ຫຼື ມີການເຄື່ອນໄຫວບໍ່ຖືກຕ້ອງຕາມເປົ້າໝາຍ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດຢູ່ ສປປ ລາວ;

4. ຫາກສິ້ນສຸດ ການປະຕິບັດໜ້າທີ່ຂອງ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ກະຊວງ, ອົງການ ລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງແຈ້ງ ແລະ ສົ່ງບັດອະນຸຍາດພັກເຊົາໃຫ້ ກົມຕໍາຫຼວດຄຸ້ມຄອງຄົນຕ່າງປະເທດ, ກອງບັນຊາການແຂວງ, ນະຄອນຫຼວງວຽງຈັນ ຫຼື ເຈົ້າໜ້າທີ່ຕໍາຫຼວດກວດຄົນ

ເຂົ້າ-ອອກເມືອງ ປະຈຳດ່ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດຢູ່ ສປປ ລາວ.

**ມາດຕາ 17 ໜ້າທີ່ຄວາມຮັບຜິດຊອບຂອງກະຊວງການເງິນ**

ກະຊວງ ການເງິນ ມີໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ການອະນຸຍາດນຳເຂົ້າ, ຍົກເວັ້ນພາສີ-ອາກອນ, ພາຫະນະທີ່ນຳເຂົ້າຊົ່ວຄາວ, ອຸປະກອນຮັບໃຊ້ດ້ານວິຊາການ, ເຄື່ອງໃຊ້ສ່ວນຕົວ ແລະ ເຄື່ອງໃຊ້ໃນຄົວເຮືອນທີ່ນຳເຂົ້າໃຫ້ຊ່ຽວຊານ ທີ່ໄດ້ລະບຸໃນເອກະສານໂຄງການ ຕາມການສະເໜີຂອງກະຊວງ ການຕ່າງປະເທດ;

2. ຕິດຕາມການປະຕິບັດພັນທະອາກອນຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ມີລາຍໄດ້ຢູ່ ສປປ ລາວ;

3. ເຂົ້າຮ່ວມປະເມີນຜົນການເຮັດວຽກຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະ ເທດ ກ່ອນການສິ້ນສຸດການປະຕິບັດໜ້າທີ່ຂອງບຸກຄົນດັ່ງກ່າວ ເພື່ອຄົ້ນຄວ້າປຶກສາຫາລື ເປັນເອກະພາບກັບກະຊວງກ່ຽວຂ້ອງ ໃນກໍລະນີມີການສະເໜີຂໍຕໍ່ສັນຍາ ໂດຍຄະນະຮັບຜິດຊອບແຜນງານ ຫຼື ໂຄງການ ຊກພ ແລະ ຄູ່ຮ່ວມພັດທະນາ;

4. ເຂົ້າຮ່ວມໃນການຄົ້ນຄວ້າ, ຍ້ອງຍໍ ແລະ ດຳເນີນເອກະສານຕ່າງໆ ໃນການຍ້ອງຍໍໃຫ້ແກ່ຊ່ຽວຊານ, ອາສາສະໝັກ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ ຂອງພາກສ່ວນທີ່ກ່ຽວຂ້ອງ;

**ມາດຕາ 18 ໜ້າທີ່ຄວາມຮັບຜິດຊອບຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນ ມີໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

1. ເປັນເຈົ້າການໃນການຮ່າງຂອບໜ້າວຽກຂອງ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ;

2. ເປັນເຈົ້າການໃນຂະບວນການວ່າຈ້າງຊ່ຽວຊານ ເຊັ່ນ: ການປະກາດຮັບສະໝັກ, ການຄັດເລືອກບັນຊີສັ້ນ, ການສຳພາດ ລວມທັງການຮ່າງສັນຍາ ການປະຕິບັດໜ້າທີ່ຂອງຊ່ຽວຊານ, ເພື່ອຮັບປະກັນຄວາມສອດຄ່ອງກັບແຜນງານ ຫຼື ໂຄງການ ຊກພ;

3. ສະເໜີຂໍອະນຸມັດຮັບເອົາ, ສືບຕໍ່, ໂຈະ ແລະ ຍົກເລີກ ການປະຕິບັດງານຂອງ ຊ່ຽວຊານ,ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ;

4. ອຳນວຍຄວາມສະດວກ, ແຕ່ງຕັ້ງພະນັກງານ ແລະ ໜ່ວຍງານທີ່ກ່ຽວຂ້ອງ ເພື່ອເຮັດວຽກຮ່ວມກັບ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຕາມຂອບໜ້າວຽກ ທີ່ກຳນົດໄວ້ໃນເອກະສານການຮ່ວມມືຂອງແຜນງານ ຫຼື ໂຄງການ ຊກພ ໂດຍສະເພາະການຖ່າຍທອດຄວາມຮູ້ຄວາມສາມາດ ທາງດ້ານວິຊາການໃຫ້ແກ່ພະນັກງານ ເພື່ອຮັບປະກັນຄວາມຍືນຍົງ;

5. ຄຸ້ມຄອງ, ຕິດຕາມ, ປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດການເຮັດວຽກງານຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ໃຫ້ກະຊວງ ແຜນການ ແລະ ການລົງທຶນ, ກະຊວງ ການຕ່າງປະເທດ ເປັນປະຈຳ ທຸກ ເດືອນ ແລະ ປະຈຳປີ;

6. ເປັນເຈົ້າການປະສານສົມທົບກັບ ບັນດາອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃນການສະເໜີ ແລະ ຈັດຕັ້ງການຍ້ອງຍໍ ໂດຍອີງຕາມດຳລັດ ວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ;

7. ແຈ້ງ, ສົ່ງບັດອະນຸຍາດພັກເຊົາ ແລະ ເອກະສານທີ່ກ່ຽວຂ້ອງ ຂອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ທີ່ເຮັດວຽກໃນແຜນງານ ຫຼື ໂຄງການ ຊກພ ທີ່ຕົນຄຸ້ມຄອງ ໃຫ້ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ, ກອງບັນຊາການແຂວງ, ນະຄອນຫຼວງວຽງຈັນ ຫຼື ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດຢູ່ ສປປ ລາວ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ**

ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະເທດ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຮ່ວມມືສາກົນ, ກະຊວງ ແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 26 ມີນາ 2024 ພາຍຫຼັງທີ່ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ;

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍລະບຽບການຄຸ້ມຄອງຊ່ຽວຊານ ແລະ ອາສາສະໝັກຕ່າງປະເທດທີ່ມາປະຕິບັດໜ້າທີ່ຢູ່ ແຜນງານ ຫຼື ໂຄງການ ຊກພ ໃນ ສປປ ລາວ ສະບັບເລກທີ: 2467/ຜທ.ຮມສ, ລົງວັນທີ 29 ສິງຫາ 2013.

ລັດຖະມົນຕີ

ຄຳເຈນ ວົງໂພສີ